# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ...................................01 - 05**

**II. ການເຄື່ອນໄຫວ ຂອງຄະນະພົວພັນຕ່າງປະເທດສູນກາງພັກ.................................................06 - 11**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ມິຖຸນາ 2025


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel : 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ.

#### 1) ກອງປະຊຸມສະໄໝສາມັນເທື່ອທີ 09 ຂອງສະພາແຫ່ງຊາດ ຊຸດທີ IX

ກອງປະຊຸມສະໄໝສາມັນເທື່ອທີ 09 ຂອງສະພາແຫ່ງຊາດຊຸດທີ IX ໄດ້ຈັດຂຶ້ນໃນລະຫວ່າງວັນທີ 09-26 ມິຖຸນາ 2025 ທີ່ ສະພາແຫ່ງຊາດ ໂດຍການເປັນປະທານ ຂອງ ສະຫາຍ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ, ໃຫ້ກຽດເຂົ້າຮ່ວມ ຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ, ສະຫາຍ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ, ມີບັນດາການນຳຂັ້ນສູງ, ອະດີດການນຳຂັ້ນສູງຂອງພັກ-ລັດ, ບັນດາສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ພິຈາລະນາ ຮັບຮອງເອົາເອກະສານຈຳນວນໜຶ່ງ ຄື: ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ແຜນງົບປະມານແຫ່ງລັດ, ແຜນເງິນຕາ 06 ເດືອນຕົ້ນປີ 2025 ແລະ ແຜນການ 06 ເດືອນທ້າຍປີ 2025, ຕິດພັນກັບການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ. ກອງປະຊຸມ ໄດ້ຕີລາຄາສູງຕໍ່ຄວາມພະຍາຍາມຂອງລັດຖະບານ ທີ່ໄດ້ນຳໃຊ້ທຸກທ່າແຮງ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ຊຶ່ງສາມາດເຮັດໃຫ້ເສດຖະກິດຂະຫຍາຍຕົວໃນລະດັບ 4.5%, ການເກັບລາຍຮັບໄດ້ຕາມແຜນ ແລະ ຄາດຄະເນຈະລື່ນແຜນໃນທ້າຍປີ 2025, ອັດຕາເງິນເຟີ້ມີທ່າອ່ຽງຫຼຸດລົງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

ກອງປະຊຸມ ຍັງໄດ້ຮັບຟັງການລາຍງານ ກ່ຽວກັບ ການທາບທາມຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ແລະ ພິຈາລະນາ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 10 ສະບັບ, ໃນນີ້ ມີກົດໝາຍສ້າງໃໝ່ 05 ສະບັບ ແລະ ກົດໝາຍສະບັບປັບປຸງ 05 ສະບັບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ, ກອງປະຊຸມໄດ້ຮັບຟັງການຊີ້ແຈງ ຕໍ່ຄຳຊັກຖາມ ຂອງ ທ່ານນາຍົກລັດຖະມົນຕີ ແລະ ບັນດາທ່ານໃນຄະນະລັດຖະບານ 06 ທ່ານ ທີ່ເປັນບັນຫາເຄັ່ງຮ້ອນຂອງສັງຄົມ, ຮັບຟັງການລາຍງານຂອງເລຂາທິການສະພາແຫ່ງຊາດ ກ່ຽວກັບ ຜົນການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນ ໃນການຍົກຍ້າຍ, ແຕ່ງຕັ້ງຄືນໃໝ່ ແລະ ການພັກການ-ຮັບອຸດໜູນບຳນານຂອງ ສະມາຊິກລັດຖະບານ 13 ທ່ານ ຕາມການ ສະເໜີຂອງນາຍົກລັດຖະມົນຕີ.

### 2. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ກອງປະຊຸມສະພາແຫ່ງຊາດຫວຽດນາມ ໃນວັນທີ 12 ມິຖຸນາ 2025 ໄດ້ລົງມະຕິເອກະພາບ 461 ສຽງ ຈາກທັງໝົດ 465 ສຽງ ໃນສະພາ ເຫັນດີ ຫຼຸດຈຳນວນ ແຂວງ ຂອງຫວຽດນາມ ຈາກ 63 ແຂວງ ໃຫ້ຍັງເຫຼືອພຽງ 34 ແຂວງ ຊຶ່ງ ເປັນໜຶ່ງ ໃນການປັບປຸງກົງຈັກຂອງລັດຖະບານຫວຽດນາມ, ຈາກທີ່ກ່ອນໜ້ານີ້ ກໍໄດ້ຫຼຸດຈຳນວນກຊວງ, ອົງການ ຈາກ 30 ກະຊວງ ແລະ ໜ່ວຍງານ ໃຫ້ເຫຼືອພຽງ 22 ກະຊວງ ແລະ ອົງການ.

ໃນວັນທີ 14 ມິຖຸນາ 2025, ສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງເອົາ ກົດໝາຍ ວ່າດ້ວຍ ການຄຸ້ມຄອງ ແລະ ການລົງທຶນລັດວິສາຫະກິດ ແລະ ກົດໝາຍ ວ່າດ້ວຍ ການປັບປຸງ ແລະ ເພີ່ມຕື່ມບາງມາດຕາ ຂອງກົດໝາຍ ວ່າດ້ວຍ ມາດຕະຖານ ແລະ ລະບຽບການເຕັກນິກ. ກົດໝາຍດັ່ງກ່າວ ຈະສາມາດຫຼຸດຂັ້ນຕອນ ແລະ ລະບຽບການຕ່າງໆ ຂອງການບໍລິຫານລັດວິສາຫະກິດ ລົງໄດ້ເຖິງ 30% ຖ້າທຽບໃສ່ລະບຽບການທີ່ດຳເນີນການໃນປັດຈຸບັນ; ຍັງໃຫ້ສິດແກ່ບັນດາລັດວິສາຫະກິດ ໃນການກຳນົດ ຫຼື ດັດປັບຍຸດທະສາດທຸລະກິດ ແລະ ແຜນທຸລະກິດ ປະຈຳປີ; ມີສິດລະດົມທຶນ ແລະ ຄ້ຳປະກັນເງິນກູ້ ໃຫ້ບັນດາບໍລິສັດທີ່ຖືຫຸ້ນຫຼາຍກວ່າ 50%. ນອກຈາກນັ້ນ, ບັນດາລັດວິສາຫະກິດ ຍັງມີສິດປ່ອຍເງິນກູ້ ໃຫ້ກັບບໍລິສັດຍ່ອຍ.

#### 2) ພັກກອມມູນິດຈີນ.

ໃນວັນທີ 10 ມິຖຸນາ 2025, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ສົນທະນາຜ່ານທາງໂທລະສັບກັບ ທ່ານ ລີແຈມຽງ ເພື່ອສະແດງຄວາມຊົມເຊີຍ ທີ່ ທ່ານ ໄດ້ຮັບເລືອກຕັ້ງ ໃຫ້ເປັນປະທານາທິບໍດີ ສ. ເກົາຫຼີ

ຄືນໃໝ່, ພ້ອມທັງໄດ້ຢໍ້າຄືນ ວ່າ: ຈີນ ແລະ ສ. ເກົາຫຼີ ແມ່ນບ້ານໃກ້ເຮືອນຄຽງ ທີ່ມີການຮ່ວມມືທີ່ດີນໍາກັນ ຕະຫຼອດໄລຍະ 33 ປີ ແຫ່ງການສ້າງຕັ້ງສາຍພົວພັນທາງການທູດຮ່ວມກັນ; ສອງປະເທດ ພ້ອມກັນຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືໃນຫຼາຍຂົງເຂດ, ການພົວພັນ ລະຫວ່າງ ຈີນ-ສ. ເກົາຫຼີ ທີ່ປອດໃສ, ໝັ້ນຄົງ ແລະ ກ້າວສູ່ລວງເລິກຢ່າງບໍ່ຢຸດຢັ້ງ ແມ່ນສອດຄ່ອງກັບກະແສ ແຫ່ງການພັດທະນາຂອງຍຸກສະໄໝ, ສອດຄ່ອງກັບຜົນປະໂຫຍດພື້ນຖານຂອງປະຊາຊົນສອງປະເທດ, ທັງມີຜົນດີຕໍ່ສັນຕິພາບ, ສະຖຽນລະພາບ, ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ ແລະ ສາກົນ. ສະຫາຍ ສີຈິ້ນຜິງ ເນັ້ນໜັກ ຕື່ມວ່າ: ຈີນ ແລະ ສ. ເກົາຫຼີ ຄວນຍຶດໝັ້ນຈຸດປະສົງຮ່ວມກັນ ແຕ່ຫົວທີ, ສືບຕໍ່ຍຶດໝັ້ນທິດທາງທີ່ມີໄມຕີຈິດມິດຕະພາບແບບບ້ານໃກ້ເຮືອນຄຽງ, ຍຶດໝັ້ນເປົ້າໝາຍທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຊຸກຍູ້ໃຫ້ສາຍພົວພັນຄູ່ຮ່ວມມືຍຸດທະສາດລະຫວ່າງ ຈີນ-ສ. ເກົາຫຼີ ນັບມື້ກ້າວຂຶ້ນສູ່ລະດັບສູງກວ່າເກົ່າ, ສ້າງຄວາມຜາສຸກໃຫ້ແກ່ປະຊາຊົນສອງປະເທດ, ທັງເພີ່ມຄວາມແນ່ນອນ ໃຫ້ແກ່ສະຖານະການໃນພາກພື້ນ ແລະ ສາກົນ ທີ່ມີການປ່ຽນແປງຢ່າງສະຫຼັບຊັບຊ້ອນ.

ໃນວັນທີ 16 ມິຖຸນາ 2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເດີນທາງໄປ ກາຊັກສະຖານ ເພື່ອເຂົ້າຮ່ວມກອງປະຊຸມສຸດຍອດ ຈີນ-ອາຊີກາງ ຄັ້ງທີ 02 ຕາມການເຊີນຂອງ ທ່ານ ຄາຊິມ ໂຈມັດ ໂຕຄາເຢັຟ (Kasym Jomart Tokayev), ປະທານາທິບໍດີກາຊັກສະຖານ. ກອງປະຊຸມສຸດຍອດຄັ້ງນີ້ ໄດ້ຈັດຂຶ້ນຢູ່ ປະເທດອາຊີກາງເປັນຄັ້ງທໍາອິດ ພາຍຫຼັງທີ່ກອງປະຊຸມສຸດຍອດ ຈີນ-ອາຊີກາງ ຄັ້ງທີ I ທີ່ ເມືອງຊີອານ ຂອງຈີນ ໃນປີ 2023 ປະສົບຜົນສໍາເລັດອັນຈົບງາມ. ຜົນສໍາເລັດສໍາຄັນ ຂອງກອງປະຊຸມ ຄັ້ງທີ 02 ນີ້ ແມ່ນ ການເປີດສູນການຮ່ວມມື 3 ແຫ່ງ ຄື: ສູນການຮ່ວມມື ເພື່ອຫຼຸດຜ່ອນຄວາມທຸກຍາກ ຈີນ-ອາຊີກາງ; ສູນການຮ່ວມມືດ້ານການສຶກສາ ຈີນ-ອາຊີກາງ ແລະ ສູນການຮ່ວມມື ເພື່ອຄວບຄຸມການກາຍເປັນທະເລຊາຍ ຈີນ-ອາຊີກາງ ແລະ 01 ເວທີການຮ່ວມມືດ້ານການຄ້າ ລະຫວ່າງ ຈີນ ແລະ ອາຊີກາງ. ໃນໂອກາດດັ່ງກ່າວ, ທ່ານ ຄາຊິມ ໂຈມັດ ໂຕຄາເຢັຟ, ປະທານາທິບໍດີກາຊັກສະຖານ ໄດ້ພົບປະສອງຝ່າຍ ສະຫາຍ ສີ ຈິ້ນຜິງ ຢູ່ທໍານຽບປະທານາທິບໍດີ ທີ່ນະຄອນຫຼວງອັສຕານາ ໂດຍ ຜູ້ນໍາທັງສອງທ່ານ ໄດ້ເຫັນດີເພີ່ມທະວີການຮ່ວມມືໃນທຸກດ້ານ ລະຫວ່າງ ຈີນ-ກາຊັກສະຖານ ໃຫ້ແໜ້ນແຟ້ນຂຶ້ນຕື່ມ, ພ້ອມກັນປະກອບສ່ວນຢ່າງຕັ້ງໜ້າ ເພື່ອການພັດທະນາ ແລະ ສັນຕິພາບ ໃນພາກພື້ນ ແລະ ໃນໂລກ. ຜູ້ນໍາທັງສອງທ່ານ ຍັງໄດ້ເປັນສັກຂີພະຍານ ລົງນາມເອກະສານການຮ່ວມມືໃນຂົງເຂດການຄ້າ, ການລົງທຶນ, ວິທະຍາສາດ-ເຕັກໂນໂລຊີ, ດ່ານພາສີ, ການທ່ອງທ່ຽວ ແລະ ຂົງເຂດອື່ນໆ ລວມ 10 ກວ່າສະບັບ.

3) **ພັກປະຊາຊົນມົງໂກລີ**

ພາຍຫຼັງການລາອອກຈາກຕໍາແໜ່ງຂອງ ນາຍົກລັດຖະມົນຕີມົງໂກລີ, ໃນວັນທີ 09 ມິຖຸນາ 2025, ພັກປະຊາຊົນມົງໂກລີ ໄດ້ຈັດກອງປະຊຸມຄະນະກໍາມະການ ພັກປະຊາຊົນມົງໂກລີ ຄັ້ງທີ 07 ໂດຍ ໄດ້ສະເໜີຊື່ທ່ານ ກົມໂບລາບ ຊັນດາຊາຕາ (Gombolavyn Zandashatar), ອະດີດປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ, ຫົວໜ້າຫ້ອງວ່າການປະທານາທິບໍດີຄົນປະຈຸບັນ ເປັນນາຍົກລັດຖະມົນຕີຄົນໃໝ່ ດ້ວຍຄະແນນສຽງເຫັນດີ ຈາກກອງປະຊຸມທັງໝົດ 100%. ແລະ ໄດ້ຮັບການເຫັນດີ ຈາກ ປະທານາທິບໍດີ ມົງໂກລີ ແລະ ຖືກຮັບຮອງຈາກສະພາຄູຣານໃຫຍ່ ຂອງມົງໂກລີແລ້ວ.

## 3. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ບັນຫາຊາຍແດນ ລະຫວ່າງ ໄທ ແລະ ກໍາປູເຈຍ**: ພາຍຫຼັງການປະທະກັນ ລະຫວ່າງ ທະຫານໄທ ແລະ ກໍາປູເຈຍໃນເຂດຊາຍແດນຂອງສອງປະເທດ ໃນວັນທີ 28 ພຶດສະພາ 2025 ຜ່ານມາ ເຮັດໃຫ້ມີທະຫານກໍາປູເຈຍ ເສຍຊີວິດ 01 ຄົນ ນັ້ນ, ລັດຖະບານຂອງສອງຝ່າຍ ກໍໄດ້ພະຍາຍາມຫາວິທີແກ້ໄຂ ແລະ ຢຸດຕິຄວາມຂັດແຍ່ງ ເນື່ອງຈາກວ່າປັດຈຸບັນ ຝ່າຍຄ້ານລັດຖະບານຂອງສອງປະເທດ ລ້ວນແຕ່ຍົກບັນຫາຊາຍແດນ ມາເປັນຂໍ້ອ້າງ ເພື່ອກ່າວໂຈມຕີລັດຖະບານ ທີ່ບໍ່ທັນສາມາດແກ້ໄຂບັນຫາຮ່ວມກັນໄດ້. ໃນວັນທີ 18 ມິຖຸນາ 2025, ທ່ານ ນາງ ແພທອງທານ ຊິນະວັດ, ນາຍົກລັດຖະມົນຕີໄທ ຈຶ່ງໄດ້ລົມສາຍ ກັບ ທ່ານ ຮຸນເຊັນ, ປະທານສະພາສູງ, ອະດີດນາຍົກລັດຖະມົນຕີກໍາປູເຈຍ ໂດຍ ທ່ານ ນາງ ແພທອງທານ ໄດ້ຮຽກຮ້ອງໃຫ້ສອງຝ່າຍ ຮ່ວມກັນແກ້ໄຂບັນຫາໂດຍສັນຕິ ເພື່ອຜົນປະໂຫຍດລວມຂອງປະຊາຊົນສອງປະເທດ. ສ່ວນ ທ່ານ ຮຸນເຊັນ ສະເໜີໃຫ້ ໄທ ກັບຄືນມາເປີດ-ປິດຊາຍແດນສອງປະເທດ ໃນເວລາຄືກັນກັບ ກໍາປູເຈຍ ຄືດັ່ງໄລຍະກ່ອນຈະມີຄວາມຂັດແຍ່ງ ເນື່ອງຈາກການຈໍາກັດເວລາເປີດ-ປິດຊາຍແດນ ແມ່ນຝ່າຍໄທ ເປັນຜູ້ເລີ່ມກ່ອນ, ຖ້າ ໄທ ເຮັດໄດ້ ຕາມການຮຽກຮ້ອງດັ່ງກ່າວ, ກໍາປູເຈຍ ຈຶ່ງຈະກັບມາອະນຸຍາດການນໍາເຂົ້າສິນຄ້າກະສິກໍາຈາກໄທຄືນໃໝ່. ປັດຈຸບັນ, ທ່ານ ນາງ ແພທອງທານ ກໍາລັງນໍາເອົາການສະເໜີ

ດັ່ງກ່າວ ກັບໄປປຶກສາຫາລືກັບຄະນະລັດຖະບານ ກ່ອນທີ່ຈະຕອບກຳປູເຈຍ ຢ່າງເປັນທາງການ. ແຕ່ປັດຈຸບັນ, ລັດຖະບານສອງຝ່າຍ ຍັງບໍ່ສາມາດຕົກລົງຫຍັງໄດ້ເທື່ອ ເນື່ອງຈາກ ເພກເຟດບຸກທາງການຂອງທ່ານ ຮຸນເຊັນ ໄດ້ປ່ອຍຄລິບສຽງ ທີ່ ທ່ານຮຸນເຊັນ ແລະ ທ່ານ ນາງ ແພທອງທານ ໄດ້ລົມສາຍທາງໂທລະສັບດັ່ງກ່າວ ເຜີຍແຜ່ລົງສື່ອອນລາຍ ທີ່ ທ່ານ ນາງ ແພທອງທານ ໄດ້ກ່າວເຖິງ ພັກ ທີ່ຮ່ວມລັດຖະບານກັບຕົນ ໃນທາງລົບ ແລະ ເປັນການໂອ້ລົມ ທີ່ມີລັກສະນະເອົາໃຈ ກຳປູເຈຍ ຫຼາຍເກີນໄປ, ເຮັດໃຫ້ ພັກພູມໃຈໄທ ບໍ່ພໍໃຈ ແລະ ໄດ້ປະກາດຈະຖອນຕົວອອກຈາກການຮ່ວມລັດຖະບານ ແຕ່ຍັງບໍ່ທັນມີການຕົກລົງໃດໆ ຈາກພັກເພື່ອໄທ ເທື່ອ. ຍ້ອນຄລິບສຽງດັ່ງກ່າວ ໄດ້ເຮັດໃຫ້ມີປະຊາຊົນໄທ ລວມຕົວປະທ້ວງ ໃຫ້ ທ່ານ ນາງ ແພທອງທານ ລາອອກຈາກຕຳແໜ່ງ ນາຍົກລັດຖະມົນຕີ ຫຼື ຍຸບສະພາ ເພື່ອຈັດການເລືອກຕັ້ງຄືນໃໝ່. ທ່ານ ນາງ ແພທອງທານ ເຫັນວ່າ ຄລິບສຽງດັ່ງກ່າວ ເປັນການກະທຳທີ່ບໍ່ເຄົາລົບກັນ ແລະ ສ້າງຄວາມແຕກແຍກ ໃຫ້ແກ່ລັດຖະບານໄທ, ຈຶ່ງໄດ້ຮຽກທູດ ກຳປູເຈຍ ປະຈຳ ໄທ ເຂົ້າພົບ ແລະ ຍື່ນໜັງສືປະທ້ວງ ຕໍ່ການກະທຳດັ່ງກ່າວ ທີ່ບໍ່ເໝາະສົມ ຂອງ ທ່ານ ຮຸນເຊັນ. ວັນທີ 23 ມິຖຸນາ 2025, ທາງການໄທຍັງໄດ້ສັ່ງປິດດ່ານ ຈຳນວນ 07 ດ່ານທີ່ຕິດກັບກຳປູເຈຍ ສ່ວນກຳປູເຈຍ ກໍໄດ້ໂຈະການນຳເຂົ້ານ້ຳມັນຈາກໄທ.

**ການເລືອກຕັ້ງປະທານາທິບໍດີ ສ. ເກົາຫຼີ**: ການເລືອກຕັ້ງປະທານາທິບໍດີ ສ. ເກົາຫຼີ ຈັດຂຶ້ນໃນວັນທີ 03 ມິຖຸນາ 2025, ຜົນການເລືອກຕັ້ງຢ່າງເປັນທາງການ ແມ່ນ ທ່ານ ລີ ແຈ ມຽງ (Lee Jae-myung), ຜູ້ນຳພັກຝ່າຍຄ້ານ ຈາກພັກປະຊາທິປະໄຕ (Democratic Party:DPK) ໄດ້ຮັບໄຊຊະນະ ດ້ວຍຄະແນນສຽງ 17,287,513 ສຽງ, ກວມເອົາ 49.42% ຂອງຜູ້ປ່ອນບັດທັງໝົດ. ສ່ວນ ທ່ານ ກິມ ມູນຊູ ( Kim Moon-soo), ຄູ່ແຂ່ງຄົນສຳຄັນຈາກພັກຂອງລັດຖະບານປັດຈຸບັນ ຄືພັກພະລັງປະຊາຊົນ (People Power Party:PPP) ໄດ້ຄະແນນສຽງ 14,395,639 ສຽງ ກວມ 41.15% ແລະ ໄດ້ປະກາດຍອມຮັບຜົນການເລືອກຕັ້ງ ໂດຍລະບຸວ່າ ຍອມຮັບການຕັດສິນໃຈຂອງປະຊາຊົນ. ທ່ານ ລີ ແຈ ມຽງ ໄດ້ເຂົ້າສາບານຮັບຕຳແໜ່ງປະທານາທິບໍດີ ຄົນທີ 21 ຂອງ ສ. ເກົາຫຼີ ໃນວັນທີ 04 ມິຖຸນາ 2025 ແລະ ໃຫ້ຄຳໝັ້ນສັນຍາ ຈະຟື້ນຟູເສດຖະກິດຂອງ ສ. ເກົາຫຼີ ແລະ ຈະບໍ່ມີການກໍ່ລັດຖະປະຫານໃດໆເກີດຂຶ້ນ. ຕໍ່ໄຊຊະນະດັ່ງກ່າວ, ຜູ້ນຳຫຼາຍປະເທດ ໄດ້ສະແດງຄວາມຊົມເຊີຍ ຕໍ່ ທ່ານ ລີ ແຈ ມຽງ, ໃນນັ້ນ ແມ່ນ ທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ; ທຳນຽບຂາວອາເມຣິກາ ກໍໄດ້ຖະແຫຼງສະແດງຄວາມຍິນດີ ພ້ອມທັງກ່າວວ່າ ສ. ອາເມຣິກາ ແລະ ສ. ເກົາຫຼີ ມີການພົວພັນທີ່ສະໜິດສະໜົມ, ຊົມເຊີຍ ສ. ເກົາຫຼີ ທີ່ຈັດການເລືອກຕັ້ງຢ່າງເປັນປະຊາທິປະໄຕ ແຕ່ແນວໃດກໍຕາມ ສ. ອາເມຣິກາ ຍັງກັງວົນ ແລະ ຕໍ່ຕ້ານການແຊກແຊງ ແລະ ອິດທິພົນຂອງຈີນ ໃນ ສ. ເກົາຫຼີ. ເຫດຜົນທີ່ ສ. ອາເມຣິກາ ກ່າວເຖິງຈີນ, ນັກວິເຄາະຫຼາຍທ່ານ ຕີລາຄາວ່າ ຍ້ອນວ່າ ທ່ານ ລີ ແຈ ມຽງ ມີທ່າອ່ຽງ ຈະຮ່ວມມືດ້ານເສດຖະກິດກັບຈີນ ຫຼາຍກວ່າ ສະໄໝ ທ່ານ ຢູນ ຊອກຢອນ, ເພາະວ່າ ທ່ານ ເຫັນວ່າ ຈີນ ເປັນປະເທດຄູ່ຄ້າສຳຄັນຂອງ ສ. ເກົາຫຼີ ແຕ່ ການຮ່ວມມືກັບອາເມຣິກາ ໃນດ້ານການປ້ອງກັນປະເທດ ກໍສຳຄັນ. ສະນັ້ນ ທ່ານ ລີ ແຈ ມຽງ ຢາກສ້າງຄວາມດຸນດ່ຽງການພົວພັນທີ່ດີ ທັງກັບຈີນ ແລະ ສ. ອາເມຣິກາ. ນອກຈາກນັ້ນ ທ່ານ ລີ ແຈ ມຽງ ຍັງມີທັດສະນະຢາກຟື້ນຟູການພົວພັນກັບ ສປປ ເກົາຫຼີ ຫຼາຍກວ່າ ທ່ານ ຢູນຊອກຢອນ ໂດຍຖະແຫຼງໃນພິທີສາບານຕົນຮັບຕຳແໜ່ງປະທານາທິບໍດີ ວັນທີ 04 ມິຖຸນາ 2025 ຜ່ານມາວ່າ ຈະຊອກຫາວິທີ ເພື່ອຢູ່ຮ່ວມກັບ ສປປ ເກົາຫຼີ.

**ແຫຼມເກົາຫຼີ**: ໃນວັນທີ 12 ມິຖຸນາ 2025, ກະຊວງປ້ອງກັນປະເທດ ສ. ເກົາຫຼີ ໄດ້ປະກາດຢຸດເປີດລຳໂພງກະຈາຍສຽງໂຄສະນາຊວນເຊື່ອ ຢູ່ບໍລິເວນເຂດຊາຍແດນຂອງ ສປປ ເກົາຫຼີ, ເຊິ່ງບັນດາລຳໂພງເຫຼົ່ານັ້ນ ໄດ້ຖືກເປີດນຳໃຊ້ ຕັ້ງແຕ່ຕົ້ນເດືອນ ມິຖຸນາ 2025 ເປັນຕົ້ນມາ ເພື່ອຕອບໂຕ້ ສປປ ເກົາຫຼີ ທີ່ປ່ອຍປຸມເປົ້າ ບັນຈຸຂີ້ເຫຍື້ອ ແລະ ເຈ້ຍໂຄສະນາຊວນເຊື່ອ ເຂົ້າມາຝັ່ງ ສ. ເກົາຫຼີ. ການເຄື່ອນໄຫວຄັ້ງນີ້ ຖື ເປັນໜຶ່ງ ໃນນະໂຍບາຍການຕ່າງປະເທດ ຂອງທ່ານ ລີ ແຈ ມຽງ (Lee Jae-myung), ປະທານາທິບໍດີ ສ. ເກົາຫຼີ ທີ່ຫາກໍໄດ້ຮັບເລືອກຕັ້ງໃຫ້ເປັນປະທານາທິບໍດີ ສ. ເກົາຫຼີ ຄົນໃໝ່ ໃນການເລືອກຕັ້ງ ຄັ້ງວັນທີ 02 ມິຖຸນາ 2025 ຜ່ານມາ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງແລະ ຟື້ນຟູການຮ່ວມມື ລະຫວ່າງ ສ. ເກົາຫຼີ ແລະ ສປປ ເກົາຫຼີ ກໍຄື ເພື່ອສັນຕິພາບໃນແຫຼມເກົາຫຼີ.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາຢູແກຣນ-ຣັດເຊຍ:** ຢູແກຣນ ແລະ ຣັດເຊຍ ຕອບໂຕ້ກັນໄປມາຢ່າງໜັກໜ່ວງ, ນັບແຕ່ຕົ້ນປີ 2025, ກອງທັບຣັດເຊຍ ສາມາດປົດປ່ອຍ ໄດ້ 152 ພື້ນທີ່ ທີ່ວຢູແກຣນ, ຫຼ້າສຸດ ແມ່ນຍຶດຄືນໝູ່ບ້ານ Zarya ໃນເຂດ Donetsk. ໃນວັນທີ 01 ມິຖຸນາ 2025, ຢູແກຣນ ກໍໄດ້ເປີດປະຕິບັດການໂຈມຕີ ທີ່ເອີ້ນວ່າ ການໂຈມຕີໃຍແມງມຸມ (Spider Web) ໂດຍໃຊ້ລົດບັນທຸກ ບັນທຸກໂດຣນ ກະຈາຍໂຈມຕີໃສ່ຖານທັບອາກາດ 04 ແຫ່ງ ທີ່ວຣັດເຊຍ ເຮັດໃຫ້ເຮືອບິນຮົບຣັດເຊຍ ເສຍຫາຍ 41 ລຳ ແລະ ໃນວັນທີ 03 ມິຖຸນາ 2025 ຢູແກຣນ ໄດ້ໃຊ້ລະເບີດໜັກ 1,100 ກິ

ໂລກຣາມ ໂຈມຕີຈາກພື້ນນ້ຳ ໃສ່ຂົວເຄີຊ ຂອງຣັດເຊຍ ທີ່ໃຊ້ເຊື່ອມຕໍ່ລະຫວ່າງ ແຫຼມໄຄຣເມຍ ກັບຣັດເຊຍ ເປັນຄັ້ງທີ 03 ນັບແຕ່ເກີດຄວາມຂັດແຍ່ງ ແຕ່ປີ 2022 ເປັນຕົ້ນມາ, ເຮັດໃຫ້ຂົວດັ່ງກ່າວ ໄດ້ຮັບຄວາມເສຍຫາຍສົມຄວນ ແລະ ໄດ້ປິດໃຊ້ບໍລິການຊົ່ວຄາວ, ໃນວັນທີ 04 ມິຖຸນາ 2025 ທ່ານ ທຣຳ ໄດ້ລົມສາຍກັບ ທ່ານ ປູຕິນ ຊຶ່ງ ທ່ານ ໄດ້ແຈ້ງວ່າ ຈະຕອບໂຕ້ປະຕິບັດການ ໃຍແມງມຸມຂອງອູແກຣນ ແລະ ໃນຄືນຂອງວັນດຽວກັນ ຣັດເຊຍໄດ້ສົ່ງຝູງໂດຣນຕອບໂຕ້ຄືນໃສ່ເມືອງ ຄາຄີບ ຂອງອູແກຣນຢ່າງຮຸນແຮງ, ເຮັດໃຫ້ທີ່ພັກອາໄສ ແລະ ພື້ນຖານໂຄງລ່າງ ເສຍເສຍຫາຍຫຼາຍສົມຄວນ.

ສອນການເຈລະຈາ ໃນວັນທີ 02 ມິຖຸນາ 2025 ລະຫວ່າງ ຄະນະຜູ້ແທນອູແກຣນ ແລະ ຣັດເຊຍ ຮອບ 02 ທີ່ນະຄອນຫຼວງອິດສະຕັນບູ, ປະເທດຕວັກກີ ສອງຝ່າຍ ເຫັນດີແລກປ່ຽນຊະເລີຍເສິກ ຝ່າຍລະ 6,000 ຄົນ. ຣັດເຊຍ ໄດ້ສົ່ງຄືນຊາກສົບທະຫານອູແກຣນ 1,212 ສົບ ແລະ ນັກໂທດອູແກຣນ ອີກ 640 ຄົນ ກັບຄືນອູແກຣນ, ໃນຂະນະທີ່ ອູແກຣນ ໄດ້ສົ່ງຊາກສົບທະຫານຣັດເຊຍ ພຽງ 76 ສົບ. ຣັດເຊຍ ຍັງມີແຜນ ຈະສົ່ງຄືນຊາກສົບທະຫານອູແກຣນອີກ 2,000 ສົບ ເຖິງວ່າ ຈະພົ່ຢູ່ໃນການຕົກລົງກັກກໍຕາມ.

**ການເມືອງ ສ. ອາເມຣິກາ:** ວັນທີ 04 ມິຖຸນາ 2025 ທ່ານ ທຣຳ, ປະທານາທິບໍດີ ສ. ອາເມຣິກາ ໄດ້ມີຄຳສັ່ງຫ້າມພົນລະເມືອງ ໃນ 12 ປະເທດ ເຂົ້າອາເມຣິກາທຸກກໍລະນີ: ມຽນມາ, ອີຣານ, ອາຟະການິດສະຖານ, ເຢເມນ, ຊູດັງ, ລີບີ, ສາທາລະນະລັດກົງໂກ, ໂຊມາລີ, ອີຣີເທຣຍ(Eritrea), ຊາດ(Chad), ເຮຕີ. ສ່ວນອີກ 07 ປະເທດ ແມ່ນຈະຈຳກັດ ຫຼື ໃຊ້ມາດຕະການເຂັ້ມງວດ ກ່ອນຈະເຂົ້າອາເມຣິກາ ເຊັ່ນ: ລາວ, ເຕີກເມນິດສະຖານ, ເວເນຊູເອລາ, ກູບາ, ບູຣຸນດີ(Burundi), ເຊຍຣາເລອອນ(Sierra Leone), ໂຕໂກ. ໂດຍອ້າງວ່າ ບັນດາປະເທດເຫຼົ່ານີ້ ມີຄວາມສ່ຽງຕໍ່ຄວາມໝັ້ນຄົງ ຂອງສ. ອາເມຣິກາ. ແນວໃດກໍຕາມ, ການອອກຄຳສັ່ງ ຂອງທ່ານ ທຣຳ ບໍ່ແມ່ນສິ່ງແປກໃໝ່, ເພາະໃນໄລຍະການດຳລົງຕຳແໜ່ງ ສະໄໝທຳອິດຂອງທ່ານ ກໍໄດ້ອອກຄຳສັ່ງລັກສະນະນີ້ເຊັ່ນກັນ, ໃນນັ້ນ ສປປ ລາວ ກໍຢູ່ໃນລາຍຊື່ປະເທດ ທີ່ຖືກມາດຕະການກວດຄົນຢ່າງເຂັ້ມງວດ; ປະຊາຊົນເຊື້ອສາຍລາວ ທີ່ອາໄສຢູ່ ສ. ອາເມຣິກາ ຫຼາຍຮ້ອຍຄົນ ກໍໄດ້ຖືກສົ່ງກັບລາວ ໃນໄລຍະນັ້ນ.

ວັນທີ 06 ມິຖຸນາ 2025, ໄດ້ມີການຊຸມນຸມປະທ້ວງ ຢູ່ນະຄອນ ລັອສ ເອັນຈະລິດສ, ລັດຄາລີຟໍເນຍ, ສ. ອາເມຣິກາ ພາຍຫຼັງ ເຈົ້າໜ້າທີ່ກວດຄົນເຂົ້າເມືອງ (ICE) ໄດ້ນຳກຳລັງເຂົ້າກວດກາຜູ້ອົບພະຍົບ ເຂົ້າເມືອງຜິດກົດໝາຍ ທີ່ນະຄອນດັ່ງກ່າວ ຈຶ່ງເຮັດໃຫ້ເກີດຄວາມບໍ່ພໍໃຈ ປະທ້ວງຕໍ່ຕ້ານ ແລະ ເກີດການປະທະກັນ ລະຫວ່າງ ຜູ້ປະທ້ວງ ແລະ ເຈົ້າໜ້າທີ່ ໃນວັນທີ 07-08/06/2025, ເຈົ້າໜ້າທີ່ ຈຶ່ງໄດ້ປະກາດໃຫ້ການປະທ້ວງ ຢູ່ກາງເມືອງ ລັອສ ເອັນຈະລິດສ ເປັນການປະທ້ວງທີ່ຜິດກົດໝາຍ ແລະ ສາມາດຈັບກຸມຜູ້ປະທ້ວງ ທີ່ໃຊ້ຄວາມຮຸນແຮງ ໄດ້ຫຼາຍຮ້ອຍຄົນ. ຕໍ່ສະຖານະການດັ່ງກ່າວ, ທ່ານ ທຣຳ, ປະທານາທິບໍດີ ສ. ອາເມຣິກາ ໄດ້ສົ່ງກອງກຳລັງພິທັກມາຕຸພູມ (National Guard) 4,000 ຄົນ ແລະ ທະຫານອີກ 7,000 ຄົນ ເຂົ້າໄປຄວບຄຸມຂະບວນການຊຸມນຸມປະທ້ວງດັ່ງກ່າວ ໂດຍໄດ້ຍິງລູກປືນຢາງ, ລະເບີດແສງ ແລະ ຍິງແກັສນ້ຳຕາ ເພື່ອສະຫຼາຍການຊຸມນຸມ, ສາມາດຈັບກຸມ ຜູ້ກໍ່ຈະລາຈົນໄດ້ 200 ກວ່າຄົນ ແລະ ຈັບກຸມ ຜູ້ເຂົ້າເມືອງຜິດກົດໝາຍໄດ້ອີກ 300 ຄົນ. ການປະທ້ວງ ໄດ້ລຸກລາມໄປຫຼາຍລັດເຊັ່ນ: ນະຄອນຫຼວງ ວໍຊິງຕັນດີຊີ, ຊິກາໂກ, ນະຄອນນິວຢອກ, ລັດຈໍເຈຍ ແລະ ແອັດແລນຕ້າ ຊຶ່ງເປັນບັນດາລັດທີ່ມີຖານສຽງສ່ວນຫຼາຍ ຂອງພັກຝ່າຍຄ້ານລັດຖະບານຄື ພັກເດໂມແຄັດ.

**ກອງປະຊຸມກຸ່ມປະເທດ G7:** ກອງປະຊຸມສຸດຍອດ ກຸ່ມປະເທດພັດທະນາແລ້ວ ຫຼື ກຸ່ມປະເທດ G7 ໄດ້ຈັດຂຶ້ນ ຢູ່ປະເທດການາດາ ລະຫວ່າງວັນທີ 15-17 ມິຖຸນາ 2025 ເປັນໂອກາດຄົບຮອບ 50 ປີ ຂອງການສ້າງຕັ້ງກຸ່ມປະເທດດັ່ງກ່າວ. ກອງປະຊຸມຄັ້ງນີ້ ບໍ່ໄດ້ອອກຖະແຫຼງການຮ່ວມກັນ ຢ່າງເປັນທາງການ ກ່ຽວກັບ ບັນຫາອູແກຣນ ພາຍຫຼັງ ທ່ານ ທຣຳ, ປະທານາທິບໍດີ ສ. ອາເມຣິກາ ເດີນທາງກັບ ກ່ອນຈະສຳເລັດກອງປະຊຸມ ຍ້ອນຄວາມກັງວົນ ກ່ຽວກັບ ຄວາມຂັດແຍ່ງລະຫວ່າງ ອິດສະຣາແອນ ແລະ ອີຣານ, ແຕ່ ທີ່ປະຊຸມ ເຫັນດີຮ່ວມກັນຫາວິທີທາງ ເພື່ອຢຸດຕິຄວາມຂັດແຍ່ງ ລະຫວ່າງ ອິດສະຣາແອນ ແລະ ອີຣານ. ນອກຈາກນັ້ນ ການາດາ ໃນຖານະເຈົ້າພາບການຈັດກອງປະຊຸມຄັ້ງນີ້ ໄດ້ຖະແຫຼງວ່າ ຜູ້ນຳ G7 ສະໜັບສະໜູນຄວາມພະຍາຍາມ ຂອງ ສ. ອາເມຣິກາ ເພື່ອສ້າງສັນຕິພາບໃນອູແກຣນ ແລະ ສະໜັບສະໜູນການເພີ່ມມາດຕະການຂວ້ຳບາດ ຕໍ່ ຣັດເຊຍ ໂດຍສະເພາະການຂວ້ຳບາດດ້ານການເງິນ, ໃນນັ້ນ ການາດາ ຈະໃຫ້ການຊ່ວຍເຫຼືອທາງທະຫານ ແກ່ ອູແກຣນ ມູນຄ່າ 1,470 ລ້ານ ໂດລາສະຫະລັດ. ໃນລະຫວ່າງການປະຊຸມຄັ້ງນີ້, ທ່ານ ທຣຳ ໄດ້ພົບປະນອກຮອບ ກັບ ທ່ານ ເຄຍ ສະຕາເມີ້ (Keir Starmer), ນາຍົກລັດຖະມົນຕີອັງກິດ ກ່ຽວກັບ ການຄ້າຂອງສອງປະເທດ ໂດຍ ສ. ອາເມຣິກາ ຕົກລົງ ຈະຫຼຸດອັດຕາສ່ວນພາສີນຳເຂົ້າສິນຄ້າ ດ້ານການບິນ ແລະ ພາສີລົດໃຫຍ່ ຈາກອັງກິດ ຈາກ 25% ລົງ

ເປັນ 10%. ນາຍົກລັດຖະມົນຕີ ຍີ່ປຸ່ນ ກໍໄດ້ປະຊຸມນອກຮອບ ກັບ ທ່ານ ທຣໍາ ເລື່ອງການຄ້າສອງຝ່າຍ, ຊຶ່ງ ຍີ່ປຸ່ນ ຢາກໃຫ້ ອາເມຣິກາ ຍົກເລີກພາສີ 25% ການນໍາເຂົ້າລົດໃຫຍ່ ແລະ 24% ສໍາລັບສິນຄ້າອື່ນໆ ຈາກຍີ່ປຸ່ນ ແຕ່ ຍັງບໍ່ສາມາດຕົກລົງກັນໄດ້ເທື່ອ.

**3) ພາກພື້ນຕາເວັນອອກກາງ**

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ໃນວັນທີ 13 ມິຖຸນາ 2025, ອິດສະຣາແອນ ໄດ້ໂຈມຕີທາງອາກາດຂະໜາດໃຫຍ່ ໃສ່ຖານທາງທະຫານ ແລະ ສູນຄົ້ນຄວ້ານິວເຄລຍ ຂອງອີຣານ ໂດຍອ້າງວ່າ ເພື່ອກໍາຈັດໂຄງການພັດທະນານິວເຄລຍຂອງອີຣານ ເພາະເປັນໄພຄຸກຄາມອິດສະຣາແອນ ໂດຍໄດ້ໂຈມຕີໃສ່ 150 ກວ່າຈຸດ ໃນ 06 ເມືອງ ຂອງອີຣານ ລວມທັງນະຄອງຫຼວງເຕຣາຣານ ເຮັດໃຫ້ມີຜູ້ເສຍຊີວິດທັງໝົດ 80 ຄົນ ລວມທັງຜູ້ບັນຊາການທະຫານສູງສຸດ, ນາຍພົນລະດັບສູງ ແລະ ນັກວິທະນາສາດຄົນສໍາຄັນຫຼາຍຄົນ ແລະ ບາດເຈັບອີກ 320 ຄົນ. ເຮັດໃຫ້ອີຣານຕອບໂຕ້ ໂດຍການຍິງລູກສອນໄຟ ໃສ່ເມືອງເທລະວີບ ຂອງອິດສະຣາແອນ ໃນວັນທີ 15 ມິຖຸນາ 2025 ເຮັດໃຫ້ມີຜູ້ເສຍຊີວິດ 04 ຄົນ ແລະ ບາດເຈັບຫຼາຍສິບຄົນ. ອີຣານ ຍັງໄດ້ປະກາດຍົກເລີກການເຈລະຈາ ຄັ້ງທີ 06 ກ່ຽວກັບ ໂຄງການນິວເຄລຍກັບ ສ. ອາເມຣິກາ ທີ່ຈະຈັດຂຶ້ນຢູ່ປະເທດໂອມານ ໂດຍກ່າວວ່າ ເມື່ອເກີດການໂຈມຕີອີຣານທີ່ໜັກໜ່ວງແບບນີ້, ກໍບໍ່ມີຄວາມຈໍາເປັນຈະເຈລະນາຈາຫຍັງອີກຕໍ່ໄປ ແລະ ຍັງເຮັດໃຫ້ ອີຣານ ໝັ້ນໃຈວ່າ ການພັດທະນາໂຄງການນິວເຄລຍ ເພື່ອປົກປ້ອງອີຣານ ເປັນແນວທາງທີ່ຖືກຕ້ອງແລ້ວ. ສ່ວນ ທາງການສ. ອາເມຣິກາ ໄດ້ຖະແຫຼງ ບໍ່ຮັບຮູ້ມາກ່ອນ ຕໍ່ແຜນໂຈມຕີອີຣານ ຂອງອິດສະຣາແອນ, ແຕ່ ທ່ານ ທຣໍາ, ປະທານາທິບໍດີ ສ. ອາເມຣິກາ ພັດໄດ້ຮຽກຮ້ອງໃຫ້ ອີຣານ ຮີບຮ້ອນຕົກລົງເລື່ອງໂຄງການນິວເຄລຍ ກັບສ. ອາເມຣິກາ ກ່ອນທີ່ ອີຣານ ຈະບໍ່ຫຼົງເຫຼືອປະເທດອີກ. ໃນວັນທີ 22 ມິຖຸນາ 2025, ສ. ອາເມຣິກາ ຈຶ່ງໄດ້ໂຈມຕີ ຕີໂຮງງານນິວເຄລຍຂອງອີຣານ 03 ແຫ່ງ, ເຮັດໃຫ້ອີຣານ ຕອບໂຕ້ດ້ວຍການໂຈມຕີຖານທັບ ສ. ອາເມຣິກາ ທີ່ຕັ້ງຢູ່ເມືອງ Al Udeid, ປະເທດກາຕາ ໃນວັນທີ 23 ມິຖຸນາ 2025 ຊຶ່ງເປັນຖານທັບ ຂອງ ສ. ອາເມຣິກາ ທີ່ໃຫຍ່ທີ່ສຸດໃນຕາເວັນອອກກາງ ແລະ ເປັນສູນບັນຊາການໃນພາກພື້ນ. ນອກຈາກນັ້ນ, ອີຣານ ຍັງມີແຜນທີ່ຈະປິດຊ່ອງແຄບ Hormuz ທີ່ເປັນເສັ້ນທາງຫຼັກໃນການຂົນສົ່ງນໍ້າມັນອອກຈາກອ່າວເປີເຊຍ ແຕ່ປັດຈຸບັນຊ່ອງແຄບດັ່ງກ່າວຍັງບໍ່ທັນຖືກປິດ, ພ້ອມນັ້ນ ຍັງມີແຜນຈະໂຈະການຮ່ວມມືລະຫວ່າງ ອີຣານ ແລະ ໜ່ວຍງານກວດສອບນິວເຄລຍຂອງ ສປຊ. ໃນວັນທີ 24 ມິຖຸນາ 2025, ສ. ອາເມຣິກາ ໄດ້ປະກາດວ່າ ອິດສະຣາແອນ ແລະ ອີຣານ ສາມາດບັນລຸການຢຸດຍິງຮ່ວມກັນແລ້ວ. ແຕ່ທັງສອງຝ່າຍ ຍັງມີການລະເມີດການຢຸດຍິງ ໂດຍມີການໂຈມຕີເຊິ່ງກັນ ແລະ ກັນຢູ່. ເຖິງຢ່າງໃດກໍຕາມ, ທັງສອງປະເທດ ຕ່າງກໍອ້າງເຖິງໄຊຊະນະໃນສົງຄາມ ແລະ ໄດ້ປະກາດຍົກເລີກມາດຕະການຮັກສາຄວາມປອດໄພຕ່າງໆ ເພື່ອໃຫ້ປະຊາຊົນກັບຄືນສູ່ການດໍາຊີວິດຢ່າງປົກກະຕິ. ຂະນະດຽວກັນ, ສປ ຈີນ ກ່າວສະໜັບສະໜູນອີຣານ ໃນການປົກປ້ອງອະທິປະໄຕ ແລະ ຄວາມໝັ້ນຄົງແຫ່ງຊາດ ແລະ ຊຸກຍູ້ໃຫ້ສະພາຄວາມໝັ້ນຄົງແຫ່ງ ສປຊ ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຫຼັກ ໃນການປົກປ້ອງສັນຕິພາບ ແລະ ຄວາມໝັ້ນຄົງສາກົນ. ຮຽກຮ້ອງໃຫ້ທຸກຝ່າຍທີ່ກ່ຽວຂ້ອງ ກັບມາສູ່ການເຈລະຈາ ເພື່ອຢຸດຕິຄວາມຂັດແຍ່ງ. ການສູ້ຮົບລະຫວ່າງ ອິດສະຣາແອນ ແລະ ອີຣານ ທີ່ດໍາເນີນເປັນເວລາ 12 ວັນ ໄດ້ເຮັດໃຫ້ປະຊາຊົນອີຣານ ເສຍຊີວິດ 610 ຄົນ ແລະ ບາດເຈັບຫຼາຍກວ່າ 3.000 ຄົນ, ພ້ອມດຽວກັນນັ້ນ ປະຊາຊົນອິດສະຣາແອນ ກໍເສຍຊີວິດ 28 ຄົນ ແລະ ໄດ້ຮັບບາດເຈັບຫຼາຍກວ່າ 1.300 ຄົນ.

ນອກນັ້ນ, ອິດສະຣາແອນ ຍັງຫັນຄວາມສົນໃຈກັບຄືນໄປຍັງເຂດກາຊາ ເພື່ອນໍາຕົວປະກັບຄືນ ແລະ ທໍາລາຍລະບອບການປົກຄອງ ຂອງກຸ່ມຮາມາສ ເຮັດໃຫ້ມີຜູ້ເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ. ສ່ວນ ກຸ່ມຮູຕີ ໃນເຢເມນ ຢືນຢັນຍັງຈະສືບຕໍ່ດໍາເນີນການທາງທະຫານຕໍ່ຕ້ານອິດສະຣາແອນ ຈົນກວ່າການຮຸກຮານໃນກາຊາ ຈະຢຸດຕິລົງ ແລະ ການປິດລ້ອມຖືກຍົກເລີກ.

# I. ການເຄື່ອນໄຫວ ຂອງຄະນະພົວພັນຕ່າງປະເທດສູນກາງພັກ

**1) ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ສົ່ງສານເສົ້າສະຫຼົດໃຈ ເຖິງ ສະຫາຍ ໂຕເລິມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ຕໍ່ການມໍລະນະກຳ ຂອງ ສະຫາຍ ຟິນຈັດຕະວາ ຮວິ່ງດັກເຮືອງ**

ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສົ່ງສານສະແດງຄວາມເສົ້າສະຫຼົດໃຈເຖິງ ສະຫາຍ ໂຕເລິມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ກອມມູນິດຫວຽດນາມ ຕໍ່ການມໍລະນະກຳ ຂອງ ສະຫາຍ ຟິນຈັດຕະວາ ຮວິ່ງດັກເຮືອງ, ອະດີດຫົວໜ້າ ຄະນະປະສານງານທົ່ວປະເທດ ທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເຄີຍມາປະຕິບັດໜ້າທີ່ສາກົນຊ່ວຍເຫຼືອລາວ, ເຊິ່ງມີເນື້ອໃນບາງຕອນດັ່ງນີ້: ຂ້າພະເຈົ້າ ມີຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ເມື່ອໄດ້ຮັບຂ່າວວ່າ ສະຫາຍ ຟົນຈັດຕະວາ ຮວິ່ງດັກເຮືອງ, ອະດີດຫົວໜ້າ ຄະນະປະສານງານທົ່ວປະເທດ ທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເຄີຍມາປະຕິບັດໜ້າທີ່ສາກົນຊ່ວຍເຫຼືອລາວ ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 11 ມິຖຸນາ 2025 ການຈາກໄປ ຂອງ ສະຫາຍ ຟົນຈັດຕະວາ ຮວິ່ງດັກເຮືອງ ບໍ່ພຽງແຕ່ເປັນການສູນເສຍນັກປະຕິວັດ ທີ່ກ້າແກ່ນຂອງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ, ແຕ່ຍັງເປັນການສູນເສຍເພື່ອນຜູ້ສະໜິດສະໜົມ, ໃກ້ຊິດຕິດແທດທີ່ສຸດຂອງ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ຂອງພວກຂ້າພະເຈົ້າອີກດ້ວຍ.

**2) ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ສົ່ງສານອວຍພອນ ເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ**

ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ສົ່ງສານອວຍພອນ ເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ ເນື່ອງໃນໂອກາດວັນສ້າງຕັ້ງ ພັກກອມມູນິດຈີນ ຄົບຮອບ 104 ປີ (1/7/1921-1/7/2025), ເຊິ່ງມີເນື້ອໃນສານບາງຕອນລະບຸວ່າ: ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ຕະຫຼອດໄລຍະ 104 ປີຜ່ານມາ ພັກກອມມູນິດຈີນ ໄດ້ນຳພາປະຊາຊົນຈີນອ້າຍນ້ອງ ຜ່ານຜ່າບົ້ນທົດສອບທີ່ຫຍຸ້ງຍາກ, ລຳບາກຂ້ຽວຂາດນາໆປະການ ແລະ ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງຮອບດ້ານ ພັກປະຊາຊົນ ປະຕິວັດລາວ ຕີລາຄາສູງ ແລະ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາຜົນສຳເລັດ ທີ່ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງຍາດມາໄດ້ຕະຫຼອດໄລຍະທີ່ຜ່ານມາ, ໂດຍສະເພາະແມ່ນ ການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XX ຂອງພັກກອມມູນິດຈີນ ກໍຄື ການສ້າງສັງຄົມນິຍົມທີ່ທັນສະໄໝແບບຈີນ, ເຊິ່ງໄດ້ເປັນບົດຮຽນອັນລ້ຳຄ່າ ແລະ ເປັນກຳລັງໃຈຢ່າງແຮງກ້າໃຫ້ແກ່ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ໃນການສືບຕໍ່ດຳເນີນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດສັງຄົມນິຍົມ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນຕະຫຼອດໄປ.

**3) ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ສົ່ງສານອວຍພອນ ເຖິງ: ຄະນະບໍລິຫານງານສູນກາງພັກປະຊາຊົນ ກຳປູເຈຍ**

ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງສານອວຍພອນເຖິງ ຄະນະບໍລິຫານງານສູນກາງພັກປະຊາຊົນ ກຳປູເຈຍ ເນື່ອງໃນໂອກາດ ວັນສ້າງຕັ້ງພັກປະຊາຊົນ ກຳປູເຈຍ ຄົບຮອບ 74 ປີ (28/06/1951-28/06/2025), ໂດຍມີເນື້ອໃນບາງຕອນວ່າ: ພວກຂ້າພະເຈົ້າ ຕີລາຄາສູງ ແລະ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ຕໍ່ບັນດາຜົນສຳເລັດໃຫຍ່ຫຼວງ ທີ່ພັກປະຊາຊົນ ກຳປູເຈຍ ຍາດມາໄດ້ໃນຕະຫຼອດໄລຍະ 74 ປີ ຜ່ານມາ, ເຊິ່ງໄດ້ນຳພາຂະບວນການຕໍ່ສູ້ຕ້ານລ່າເມືອງຂຶ້ນ ເພື່ອຍາດເອົາເອກະລາດມາໃຫ້ປະເທດຊາດ, ນຳພາປະຊາຊົນ ກຳປູເຈຍ ລຸກຮື້ຂຶ້ນໂຄ່ນລົ້ມລະບອບຂ້າລ້າງເຜົ່າພັນຂອງໂປ່ນປົດ, ສືບຕໍ່ນຳພາພະລາກິດການຟື້ນຟູ, ສ້າງສາພັດທະນາປະເທດຊາດຜ່ານຜ່າສິ່ງທ້າ

ຫາຍນາງປະການ ຈຶ່ງສາມາດຍາດໄດ້ຜົນສໍາເລັດຮອບດ້ານໃນປັດຈຸບັນເຮັດໃຫ້ຣາຊະອານາຈັກ ກໍາປູເຈຍ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ ຂອງປະຊາຊົນ ນັບມື້ນັບໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ບັນລຸຕາມ 05 ເປົ້າໝາຍຍຸດທະສາດ ຂອງພັກປະຊາຊົນກໍາປູເຈຍ ທີ່ໄດ້ກໍານົດໄວ້.

**4) ຄະນະຜູ້ແທນ ຄະນະພົວພັນຕ່າງປະເທດສູນກາງພັກຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ**




ໃນລະຫວ່າງວັນທີ 02-04 ມິຖຸນາ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍຄະນະ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ, ໂດຍໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ເຈີນເກິ້ມຕູ້, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ. ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມພາກພູມໃຈ ແລະ ປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ນໍາພາຄະນະເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ ເປັນຄັ້ງທໍາອິດໃນຖານະຕໍາແໜ່ງ ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕາມການເຊື້ອເຊີນຂອງ ສະຫາຍ ບຸຍແທງເຊີນ, ກໍາມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການຕ່າງປະເທດຫວຽດນາມ ພາຍຫຼັງທີ່ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ໄດ້ຢຸດຕິການເຄື່ອນໄຫວ ແລະ ໂຮມເຂົ້າກັບກະຊວງການຕ່າງປະເທດຫວຽດນາມ.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ພົບປະເຮັດວຽກກັບ ສະຫາຍ ບຸຍແທງເຊີນ, ກໍາມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດຫວຽດນາມ, ສອງຝ່າຍ ຕີລາຄາສູງຕໍ່ ການພົວພັນຮ່ວມມື ແລະ ປະສານສົມທົບຢ່າງສະໜິດແໜ້ນ ລະຫວ່າງ ສອງ ຄະນະພົວພັນຕ່າງປະເທດ ຂອງສອງສູນກາງພັກ ລາວ-ຫວຽດນາມ ໃນຕະຫຼອດໄລຍະຜ່ານມາ. ພ້ອມນັ້ນ, ເພື່ອເປັນການສືບຕໍ່ເສີມຂະຫຍາຍມູນເຊື້ອ ການພົວພັນຮ່ວມມືອັນດີງາມຂອງ ສອງ ອົງການ, ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ກະຊວງການຕ່າງປະເທດຫວຽດນາມ ເຫັນດີເປັນເອກະພາບ ໃນການສືບຕໍ່ປະສານສົມທົບຢ່າງສະໜິດແໜ້ນ ໃນການຈັດຕັ້ງຜັນຂະຫຍາຍບັນດາ ຂໍ້ຕົກລົງການຮ່ວມມືຂອງການນໍາຂັ້ນສູງຂອງ ສອງພັກສອງລັດ ລາວ-ຫວຽດນາມ ໃຫ້ມີປະສິດທິຜົນສູງ, ເຫັນດີເປັນເອກະພາບ ໃນການກະກຽມສ້າງແຜນການຮ່ວມມື ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ກະຊວງການຕ່າງປະເທດຫວຽດນາມ ໄລຍະ 2026-2030, ເອກະພາບກັນກ່ຽວກັບທິດທາງ ການຮ່ວມມືໃນທ້າຍປີ 2025, ໂດຍສະເພາະການກະກຽມໃຫ້ແກ່ການເຄື່ອນໄຫວຢ້ຽມຢາມເຊິ່ງກັນແລະກັນ ຂອງການນໍາຂັ້ນສູງຂອງສອງຝ່າຍ, ສ້າງບັນດາກົນໄກການຮ່ວມມື, ເພີ່ມທະວີການແລກ ປ່ຽນຂໍ້ມູນຂ່າວສານ, ແລກປ່ຽນບົດຮຽນກໍ່ສ້າງພັກ, ການກະກຽມກອງປະຊຸມໃຫຍ່ ຂອງແຕ່ລະພັກ; ປະສານສົມທົບຢ່າງແໜ້ນແຟ້ນ ໃນການຈັດກິດຈະກໍາ ການເຄື່ອນໄຫວສະເຫຼີມສະຫຼອງວັນສໍາຄັນຕ່າງໆ ຂອງສອງປະເທດ ແລະ ຍູ້ແຮງການໂຄສະນາສຶກສາອົບຮົມກ່ຽວກັບສາຍພົວພັນພິເສດ ລາວ-ຫວຽດນາມ. ພ້ອມດ້ວຍຄະນະ ໄດ້ສືບຕໍ່ຢ້ຽາຢາມສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ເຊິ່ງໄດ້ພົບປະກັບ ສະຫາຍ ຮສຈ.ປອ ຫງວຽນຢຸຍບັກ, ຮອງຫົວໜ້າຜູ້ປະຈໍາການ ສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ແລະ ສົນທະນາກັບ ບັນດາພະນັກງານການນໍາ, ອາຈານສອນ, ນັກສຶກສາລາວ ແລະ

ຫວຽດນາມ ກ່ຽວກັບ ສາຍພົວພັນພິເສດ ລາວ-ຫວຽດນາມ, ຫວຽດນາມ-ລາວ. ສະຫາຍ ບຸນເຫຼືອ ພັນດານຸວົງ ພ້ອມດ້ວຍຄະນະ ໄດ້ສືບຕໍ່ຢ້ຽມຢາມແຂວງຫ້າຍເຢືອງ ໂດຍໄດ້ພົບປະກັບ ສະຫາຍ ເຈີນດິກຖັງ, ກຳມະການສູນກາງພັກ, ເລຂາພັກແຂວງຫ້າຍເຢືອງ ພ້ອມດ້ວຍ ຄະນະພັກ, ຄະນະນຳ, ອົງການຂອງພັກ ແລະ ພະແນກການຂອງແຂວງຫ້າຍເຢືອງ; ຢ້ຽມຢາມບາງພື້ນຖານການຜະລິດ ແລະ ສະຖານທີ່ທາງວັດທະນະນຳ ຂອງແຂວງຫ້າຍເຢືອງ.

ສອງຝ່າຍ ຕີລາຄາສູງຕໍ່ ການພົວພັນຮ່ວມມື ແລະ ປະສານສົມທົບຢ່າງສະໜິດແໜ້ນ ລະຫວ່າງ ສອງ ຄະນະພົວພັນຕ່າງປະເທດ ຂອງສອງສູນກາງພັກ ລາວ-ຫວຽດນາມ ໃນຕະຫຼອດໄລຍະຜ່ານມາ. ພ້ອມນັ້ນ, ເພື່ອເປັນການສືບຕໍ່ເສີມຂະຫຍາຍມູນເຊື້ອ ການພົວພັນຮ່ວມມືອັນດີງາມຂອງ ສອງ ອົງການ, ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ແລະ ກະຊວງການຕ່າງປະເທດຫວຽດນາມ ເຫັນດີເປັນເອກະພາບ ໃນການສືບຕໍ່ປະສານສົມທົບຢ່າງສະໜິດແໜ້ນ ໃນການຈັດຕັ້ງຜັນຂະຫຍາຍບັນດາ ຂໍ້ຕົກລົງການຮ່ວມມືຂອງການນຳຂັ້ນສູງຂອງ ສອງພັກສອງລັດ ລາວ-ຫວຽດນາມ ໃຫ້ມີປະສິດທິຜົນສູງ, ເຫັນດີເປັນເອກະພາບ ໃນການກະກຽມສ້າງແຜນການຮ່ວມມືລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ກະຊວງການຕ່າງປະເທດຫວຽດນາມໄລຍະ 2026-2030, ເອກະພາບກັນກ່ຽວກັບທິດທາງ ການຮ່ວມມືໃນທ້າຍປີ 2025, ໂດຍສະເພາະການກະກຽມໃຫ້ແກ່ການເຄື່ອນໄຫວຢ້ຽມຢາມເຊິ່ງກັນແລະກັນ ຂອງການນຳຂັ້ນສູງຂອງສອງຝ່າຍ, ສ້າງບັນດາກົນໄກການຮ່ວມມື, ເພີ່ມທະວີການແລກ ປ່ຽນຂໍ້ມູນຂ່າວສານ, ແລກປ່ຽນບົດຮຽນກໍ່ສ້າງພັກ, ການກະກຽມກອງປະຊຸມໃຫຍ່ ຂອງແຕ່ລະພັກ; ປະສານສົມທົບຢ່າງແໜ້ນແຟ້ນ ໃນການຈັດກິດຈະກຳ ການເຄື່ອນໄຫວສະເຫຼີມສະຫຼອງວັນສຳຄັນຕ່າງໆ ຂອງສອງປະເທດ ແລະ ຍູ້ແຮງການໂຄສະນາສຶກສາອົບຮົມກ່ຽວກັບສາຍພົວພັນພິເສດ ລາວ-ຫວຽດນາມ.

**5) ບົດຄວາມສະເຫຼີມສະຫຼອງ ການສ້າງຕັ້ງ ຄຕພ ຄົບຮອບ 42 ປີ (29/6/1983 - 29/6/2025)**

ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ປວງຊົນລາວທັງຊາດ ພວມແຂ່ງຂັນສ້າງຜົນງານຂ່ຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ທີ່ຈະມາເຖິງ ແລະ ເປັນໄລຍະທີ່ ອົງຄະນະພັກ, ສະມາຊິກພັກ-ພະນັກງານທົ່ວ ຄະນະພົວພັນຕ່າງປະເທດສູນກາງພັກ ພວມກະກຽມໄຂກອງປະຊຸມໃຫຍ່ ຄັ້ງທີ III ຂອງຕົນ ເຊິ່ງກໍພໍດີຖືກກັບໂອກາດ ວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ບັນຈົບມາຄົບຮອບ 42 ປີ ໃນວັນທີ 29 ມິຖຸນາ 2025 ໂດຍເປັນອີກໜຶ່ງວັນ ທີ່ມີຄວາມໝາຍຄວາມສຳຄັນຕໍ່ ຄະນະພົວພັນຕ່າງປະເທດສູນກາງພັກ ກໍຄື ຂະແໜງການຕ່າງປະເທດໃນທົ່ວປະເທດ.

ຄະນະພົວພັນຕ່າງປະເທດສູນກາງພັກ ເປັນອົງການຈັດຕັ້ງໜຶ່ງຂອງພັກ ຂຶ້ນກັບ ຄະນະບໍລິຫານງານສູນກາງພັກ, ມີຖານະທຽບເທົ່າຄະນະຂອງພັກຂັ້ນສູນກາງ, ມີພາລະບົດບາດເປັນເສນາທິການໃຫ້ ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າແຜນຍຸດທະສາດ, ແນວທາງນະໂຍບາຍການພົວພັນຕ່າງປະເທດຂອງພັກ; ຕາງໜ້າສູນກາງພັກ ໃນການພົວພັນຮ່ວມມືກັບພັກການເມືອງຂອງຕ່າງປະເທດ ໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ຕາມການມອບໝາຍຂອງ ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ພ້ອມທັງເປັນເຈົ້າການຊີ້ນຳ, ຄຸ້ມຄອງການເຄື່ອນໄຫວວຽກງານພົວພັນຕ່າງປະເທດ ຂອງອົງການຈັດຕັ້ງພັກ ແລະ ການທູດປະຊາຊົນ ໃຫ້ມີຄວາມເປັນເອກະພາບ ໂດຍຜ່ານປະຕູດຽວ ໂດຍແມ່ນຫ້ອງການຕໍ່ສູ້ການເມືອງ ແລະ ຕ່າງປະເທດ ຂອງແນວລາວສ້າງຊາດ ມີສຳນັກງານຢູ່ເມືອງວຽງໄຊ, ແຂວງຫົວພັນ ທີ່ຮັບຜິດຊອບວຽກງານການຕ່າງປະເທດທັງສາຍພັກ ແລະ ສາຍລັດ. ພາຍຫຼັງການສະຖາປະນາ ສປປ ລາວ ໃນປີ 1975 ຮອດປີ 1983, ກະຊວງການຕ່າງປະເທດ ຮັບຜິດຊອບວຽກງານພົວພັນຕ່າງປະເທດ ທັງສາຍພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນ. ຕໍ່ມາພາຍໃຕ້ແນວທາງການປ່ຽນແປງໃໝ່ ແລະ ເພື່ອເປີດກວ້າງການພົວພັນຕ່າງປະເທດ ບວກກັບ ບໍລິມາດວຽກງານນັບມື້ນັບຫຼາຍຂຶ້ນ, ກົມການເມືອງສູນກາງພັກ ຈຶ່ງໄດ້ອອກມະຕິຕົກລົງສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ໃນເດືອນມິຖຸນາ 1983 ແລະ ກົດລະບຽບສະບັບທຳອິດຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຖືກຮັບຮອງ ໃນວັນທີ 29 ມິຖຸນາ 1983 ຊຶ່ງເປັນວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ຂຶ້ນຢ່າງເປັນທາງການ.

ຕະຫຼອດໄລຍະ 42 ປີ ຜ່ານມາ, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ໂຄງປະກອບການຈັດຕັ້ງ ແລະ ພາລະບົດບາດ ກໍ່ໄດ້ມີການປັບປຸງໃຫ້ເຕີບໃຫຍ່ເຂັ້ມແຂງເພື່ອແບກຫາບໜ້າທີ່ການເມືອງ ແລະ ສອດຄ່ອງກັບສະພາບການຕົວຈິງ ໂດຍໄດ້ແບ່ງອອກເປັນ 5 ໄລຍະ ດັ່ງນີ້:

- ໄລຍະທີ 1: ແຕ່ປີ 1983-1993: ສະຫາຍ ພູນ ສີປະເສີດ, ກຳມະການກົມການເມືອງສູນກາງພັກ ໄດ້ຮັບການແຕ່ງຕັ້ງເປັນ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຜູ້ທຳອິດ, ທັງເປັນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະ ເທດ, ໄລຍະນີ້ ປະກອບມີ 3 ກົມ ຄື: ຫ້ອງການ, ກົມຄົ້ນຄວ້າສັງລວມ ການພົວພັນ ລະຫວ່າງ ພັກກັບພັກ ແລະ ກົມຊີ້ນຳການເຄື່ອນໄຫວສາກົນ ຂອງອົງການຈັດຕັ້ງມະຫາຊົນ.

- ໄລຍະທີ 2: ແຕ່ປີ 1993-2006: ສະຫາຍ ສົມສະຫວາດ ເລັ່ງສະຫວັດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດ, ໃນໄລຍະນີ້ ໂດຍປະຕິບັດຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງ ພັກ, ແລະ ມະຕິຕົກລົງ ຂອງ ກົມການເມືອງສູນກາງພັກ ໄດ້ໂອນຄະນະກຳມະການເພື່ອສັນຕິພາບ ແລະ ສາມັກຄີ ຂອງ ລາວ ແລະ ຄະນະຄົ້ນຄວ້າວິໄຈການເມືອງ ເຂົ້າມາສັງກັດຢູ່ໃນຄະນະພົວພັນຕ່າງປະເທດສູນກາງພັກ; ໃນໄລຍະນີ້ ໄດ້ປັບປຸງກົງຈັກການຈັດຕັ້ງເປັນ 4 ກົມ ຄື : ຫ້ອງການ, ກົມຄົ້ນຄວ້າສັງລວມ, ກົມພົວພັນພັກ ແລະ ກົມພົວພັນຄົນເຊື້ອຊາດລາວ ຢູ່ຕ່າງປະເທດ; ຕົກມາຮອດປີ 2002, ເພື່ອໃຫ້ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສອດຄ່ອງກັບສະພາບການໃນໄລຍະໃໝ່, ຈຶ່ງຂະຫຍາຍເປັນ 5 ກົມ, ເພີ່ມກົມພົວພັນສາກົນຂອງ ອົງການຈັດຕັ້ງມະຫາຊົນ.

- ໄລຍະທີ 3: ແຕ່ປີ 2006-2015: ສະຫາຍ ທອງລຸນ ສີສຸລິດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ໄດ້ຮັບການແຕ່ງຕັ້ງເປັນ ເລຂາຄະນະພັກກະຊວງການຕ່າງປະເທດ ແລະ ຄະນະພົວພັນຕ່າງປະເທດສູນກາງພັກ, ທັງເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ລັດຖະມົນຕີກະຊວງການຕ່າງປະເທດ, ໄລຍະນີ້ ກົງຈັກການຈັດຕັ້ງຂອງ ຄະນະພົວພັນຕ່າງປະເທດ ໄດ້ປັບປຸງຈາກ 5 ກົມ ເຫຼືອພຽງ 3 ກົມ ຄື: ຫ້ອງການ, ກົມພົວພັນພັກ ແລະ ກົມພົວພັນສາກົນ ຂອງ ອົງການຈັດຕັ້ງມະຫາຊົນ.

- ໄລຍະທີ 4: ແຕ່ປີ 2015-2020: ຍ້ອນການເຕີບໃຫຍ່ຂະຫຍາຍຕົວ ຂອງ ວຽກງານການຕ່າງປະເທດ ຂອງປະເທດເຮົານັບມື້ນັບກວ້າງຂວາງ, ເລິກເຊິ່ງ ບໍລິມາດການຊີ້ນຳ-ນຳພາ ຂອງ ຄະນະພັກ ຂະແໜງການຕ່າງປະເທດ ນັບມື້ນັບຫຼາຍຂຶ້ນ, ຄະນະເລຂາທິການສູນກາງພັກ ຈຶ່ງໄດ້ຕົກລົງແຍກ ອົງຄະນະພັກກະຊວງການຕ່າງປະເທດ ແລະ ຄະນະພົວພັນຕ່າງປະເທດສູນກາງພັກອອກເປັນ 2 ອົງຄະນະພັກເອກະລາດ ຕາມມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 42/ຄລສພ, ລົງວັນທີ 4 ພຶດສະພາ 2015, ສະຫາຍ ນາງ ສູນທອນ ໄຊຍະຈັກ, ກຳມະການສູນກາງພັກ ໄດ້ຮັບການແຕ່ງຕັ້ງເປັນ ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ໄລຍະນີ້ ກົງຈັກການຈັດຕັ້ງ ໄດ້ປັບປຸງຄືນ ປະກອບມີ 6 ກົມ ຄື : ຫ້ອງການ, ກົມຄົ້ນຄວ້າ-ສັງລວມ, ກົມອາຊີ-ປາຊີຟິກ ແລະ ອາຟຣິກາ, ກົມເອີຣົບ-ອາເມລິກາ ແລະ ກົມພົວພັນສາກົນຂອງອົງການຈັດຕັ້ງມະຫາຊົນ.

- ໄລຍະທີ 5: ແຕ່ປີ 2021 ເປັນຕົ້ນມາ : ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເປັນເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ໄລຍະນີ້ ໂຄງປະກອບການຈັດຕັ້ງ ຍັງຮັກສາໄວ້ 6 ກົມຄືເກົ່າ, ແຕ່ອີງໃສ່ການປະຕິບັດວຽກງານຕົວຈິງ ແລະ ເພື່ອໃຫ້ສອດຄ່ອງກັບວຽກງານໄລຍະໃໝ່ ມາຮອດປີ 2023, ໄດ້ປັບປຸງປ່ຽນຊື່ໃໝ່ 2 ກົມ ຄື ກົມຄົ້ນຄວ້າ-ສັງລວມ ເປັນກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ, ກົມພົວພັນສາກົນຂອງອົງການຈັດຕັ້ງມະຫາຊົນ ປ່ຽນເປັນ ກົມການທູດປະຊາຊົນ. ເດືອນພະຈິກ 2024, ກົມການເມືອງສູນກາງພັກ ໄດ້ແຕ່ງຕັ້ງ ສະຫາຍ ບຸນເຫຼືອ ພັນດານຸວົງ, ເປັນຮັກສາການເລຂາຄະນະພັກ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເພື່ອສືບຕໍ່ນຳພາ-ຊີ້ນຳວຽກງານຂອງຄະນະພົວພັນຕ່າງປະເທດສູນກາງພັກ ເຊິ່ງປັດຈຸບັນ ຄະນະພົວພັນຕ່າງປະເທດສູນກາງພັກ ມີພະນັກງານທັງໝົດ 140 ກວ່າຄົນ ແລະ ພວມກະກຽມດຳເນີນກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກຂອງຕົນ ໃນໄວໆນີ້.

ພ້ອມດຽວກັນນັ້ນ, ພັກເຮົາ ກໍໄດ້ເປີດກວ້າງການພົວພັນກັບບັນດາພັກກອມມູນິດ, ພັກກຳມະກອນ, ພັກການເມືອງທີ່ກ້າວໜ້າ, ບັນດາພັກກຳອຳນາດ, ພັກຮ່ວມລັດຖະບານ ແລະ ອົງການຈັດຕັ້ງສາກົນຢູ່ພາກພື້ນ ແລະ ໃນໂລກ ໂດຍຜ່ານຂອບການຮ່ວມມືຫຼາຍຝ່າຍ ເຊັ່ນ : ກອງປະຊຸມສາກົນ ຂອງບັນດາພັກການເມືອງອາຊີ (ICAPP), ກອງປະຊຸມສາກົນຂອງພັກກອມມູນິດ ແລະ ກຳມະກອນສາກົນ (IMCWP), ກອງປະຊຸມເວທີປຶກສາຫາລືຊາວປາວໂລ ແລະ ກອງປະຊຸມຂອບຫຼາຍຝ່າຍອື່ນໆ. ຄະນະພົວພັນຕ່າງປະເທດສູນກາງພັກ ຍັງໄດ້ເປັນໃຈກາງໃນການປະສານງານ ໃຫ້ແກ່ການ

ເຄື່ອນໄຫວຕ່າງປະເທດ ຂອງ ບັນດາອົງການຈັດຕັ້ງມະຫາຊົນ, ສູນກາງແນວລາວສ້າງຊາດ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ, ສູນກາງກຳມະບານລາວ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ບັນດາສະມາຄົມມິດຕະພາບລາວ ກັບຕ່າງປະເທດ, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ເພື່ອສ້າງສາຍພົວພັນມິດຕະ ພາບ ແລະ ການຮ່ວມມື ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ ເຊິ່ງໄດ້ກາຍເປັນອີກກຳລັງແຮງ ໃນການເຜີຍແຜ່ນະໂຍບາຍຂອງພັກ, ລັດເຮົາ ຕໍ່ຕ່າງປະເທດ, ສ້າງຄວາມເຂົ້າອົກເຂົ້າໃຈ ລະຫວ່າງ ປະຊາຊາດ, ຊຸກຍູ້ ແລະ ສົ່ງເສີມການຮ່ວມມື ທາງດ້ານເສດຖະກິດ, ການຄ້າ ແລະ ວັດທະນະທຳ-ສັງຄົມ ລະຫວ່າງ ສປປ ລາວ ກັບ ບັນດາປະເທດກ່ຽວຂ້ອງ ກໍຄືປະກອບສ່ວນໃນການສ້າງສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ສາກົນ.

ສະເພາະໃນ 1 ປີ ທີ່ຜ່ານມາ, ຄຽງຄູ່ກັບການເປັນເຈົ້າພາບໝູນວຽນອາຊຽນ, ກອງປະຊຸມລັດຖະສະພາອາຊຽນ ແລະ ຜົນງານທີ່ພົ້ນເດັ່ນຂອງວຽກງານສາຍລັດ, ການເຄື່ອນໄຫວຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ກໍຍາດໄດ້ຜົນງານທີ່ພົ້ນເດັ່ນຫຼາຍປະການ ເປັນຕົ້ນແມ່ນ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ໄດ້ຢ້ຽມຢາມລັດຖະກິດ ສສ ຫວຽດນາມ ແລະ ເຂົ້າຮ່ວມກອງປະຊຸມພົບປະ 2 ກົມການເມືອງ ລາວ-ຫວຽດນາມ ປະຈຳປີ 2024 ແລະ 2025; ເຂົ້າຮ່ວມງານສະເຫຼີມສະຫຼອງ “5 ຫຼັກການ ແຫ່ງການຢູ່ຮ່ວມກັນໂດຍສັນຕິ” ຄົບຮອບ 70 ປີ ຢູ່ ສປ ຈີນ; ເຂົ້າຮ່ວມງານສະເຫຼີມສະຫຼອງ ຄົບຮອບ 80 ປີ ວັນໄຊຊະນະສົງຄາມ ຢູ່ ສ. ຣັດເຊຍ, ເຂົ້າຮ່ວມກອງປະຊຸມສຸດຍອດຄັ້ງທີ 14 ລະຫວ່າງ  ພັກປະຊາຊົນ ປະຕິວັດລາວ-ພັກປະຊາຊົນ ກຳປູເຈຍ ທີ່ ກຳປູເຈຍ. ພັກ ປປ ລາວ ຍັງເປັນເຈົ້າພາບຈັດກອງປະຊຸມສຸດຍອດ ຄັ້ງທີ 15 ລະຫວ່າງ ພັກປະຊາຊົນ ປະຕິວັດລາວ-ພັກປະຊາຊົນ ກຳປູເຈຍ; ເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳສາມພັກ ລາວ-ຫວຽດນາມ-ກຳປູເຈຍ ທີ່ ສສ ຫວຽດນາມ; ນອກຈາກນັ້ນ, ຄະນະນຳ ຄະນະພົວພັນຕ່າງປະເທດ ໄດ້ໄປຢ້ຽມຢາມແລກປ່ຽນບົດຮຽນ ຢູ່ ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ, ສິງກະໂປ, ອົດສະຕຣາລີ ແລະ ຍີ່ປຸ່ນ. ພ້ອມກັນນັ້ນ, ກໍໄດ້ຕ້ອນຮັບຄະນະຜູ້ແທນຂັ້ນສູງ ຂອງ ພັກກອມມູນິດຫວຽດນາມ, ພັກກອມມູນິດຈີນ, ພັກປະຊາຊົນ ກຳປູເຈຍ, ພັກແຮງງານເກົາຫຼີ, ພັກຣັດເຊຍເອກະພາບ, ພັກກອມມູນິດຍີ່ປຸ່ນ, ພັກເກີຣິນດຣາ, ພັກໂກນກາ ຂອງ ອິນໂດເນເຊຍ ແລະ ພັກກອມມູນິດເວເນຊູເອລາ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ; ຈັດຕັ້ງປະຕິບັດແຜນການຮ່ວມມື 2 ພັກ ລາວ-ຫວຽດນາມ, ລາວ-ຈີນ ໂດຍສະເພາະແມ່ນ ການຝຶກອົບຮົມພະນັກງານ ແລະ ກອງປະຊຸມສຳມະນາທິດສະດີ ລະຫວ່າງ 2 ພັກ ລາວ-ຫວຽດນາມ, ລາວ-ຈີນ. ໃນຂອບຫຼາຍຝ່າຍ ກໍໄດ້ເຂົ້າຮ່ວມກອງປະຊຸມສາກົນຂອງພັກການເມືອງອາຊີ (ICAPP) ຢູ່ ກຳປູເຈຍ, ກອງປະຊຸມສາກົນ ວ່າດ້ວຍຄວາມໝັ້ນ ຄົງເອີຣົບ-ອາຊີ ຢູ່ ສ. ຣັດເຊຍ ແລະ ອື່ນໆ; ສ່ວນວຽກງານການທູດປະຊາຊົນ ສະເພາະໃນປີ 2024 ກໍໄດ້ສົ່ງຄະນະຜູ້ແທນ ໄປຢ້ຽມຢາມຕ່າງປະເທດ 16 ຄະນະ ແລະ ຕ້ອນຮັບຄະນະຜູ້ແທນມາຢ້ຽມຢາມລາວ 17 ຄະນະ, ຈັດກອງປະຊຸມ, ກິດຈະກຳ ແລະ ປາຖະກະຖາ 50 ຄັ້ງ, ສາມາດຂົນຂວາຍການຊ່ວຍເຫຼືອເປັນມູນຄ່າ 924.700 ໂດລາສະຫະລັດ, 20.000 ໂດລາອົດສະຕຣາລີ, 6.000 ເອີໂຣ ແລະ 6 ຕື້ກວ່າກີບ.

ອີກໜຶ່ງຜົນງານພົ້ນເດັ່ນໃນປີທີ່ຜ່ານມາ ແມ່ນສາມາດຂະຫຍາຍການພົວພັນກັບບັນການເມືອງເພີ່ມອີກ 1 ພັກ ຄືພັກເກີຣິນດາ (ອິນໂດເນເຊຍ) ເຊິ່ງມາເຖິງປັດຈຸບັນ, ພັກປະຊາຊົນ ປະຕິວັດລາວ ໄດ້ພົວພັນກັບ 145 ພັກການເມືອງ ໃນ 85 ປະເທດທົ່ວໂລກ; ໄດ້ພົວພັນ ແລະ ເຂົ້າເປັນສະມາຊິກໃນຂອບການຮ່ວມມືຫຼາຍຝ່າຍກັບ 3 ອົງການຈັດຕັ້ງສາກົນຂອງພັກການເມືອງ ອັນພົ້ນເດັ່ນ ແມ່ນໄດ້ເຂົ້າເປັນສະມາຊິກໜ່ວຍງານວິຊາການ ຂອງ IMCWP; ສ້າງຕັ້ງສະມາຄົມມິດຕະພາບກັບຕ່າງປະເທດທັງໝົດມີ 20 ສະມາຄົມ ແລະ 1 ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ກັບຕ່າງປະເທດ; ສ່ວນຢູ່ຂັ້ນທ້ອງຖິ່ນ ຍັງໄດ້ສ້າງຕັ້ງສະມາຄົມມິດຕະພາບ ລາວ-ຫວຽດນາມ, ລາວ-ຈີນ ຢູ່ 18 ແຂວງຂອງລາວ ແລະ ສະມາຄົມມິດຕະພາບ ລາວ-ກຳປູເຈຍ ຢູ່ແຂວງຈຳປາສັກ ແລະ ອັດຕະປື.

**6) ຄະນະພົວພັນຕ່າງປະເທດສູນກາງພັກ ສະເຫຼີມສະຫຼອງວັນເດັກນ້ອຍສາກົນ ຄົບຮອບ 100 ປີ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 45 ປີ**



ໃນຕອນເຊົ້າຂອງວັນທີ 29 ພຶດສະພາ 2025 ຢູ່ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີສະເຫຼີມສະຫຼອງ ວັນເດັກນ້ອຍສາກົນ ວັນທີ 01 ມິຖຸນາ 2025 ຄົບຮອບ 100 ປີ (01/06/1925-01/06/2025) ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 45 ປີ ໂດຍການໃຫ້ກຽດເຂົ້າຮ່ວມ ຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ ຮັກສາການ ເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ພ້ອມດ້ວຍພັນລະຍາ, ມີບັນດາສະຫາຍຄະນະກົມ, ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ, ພະນັກງານຄະນະພົວພັນຕ່າງປະເທດສູງກາງພັກ ພ້ອມດ້ວຍລູກຫຼານ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີປູກຕົ້ນໄມ້ແຫ່ງຊາດ ຄັ້ງນີ້ ເປັນການຈັດຕັ້ງປະຕິບັດແຜນພັດທະນາຂອງຊາດ ໃນການເສີມສ້າງສະພາບແວດລ້ອມໃຫ້ມີຄວາມຍືນຍົງ, ເພີ່ມພື້ນທີ່ສີຂຽວ, ເປັນການປັບປຸງທັດສະນີຍະພາບ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ, ໃຫ້ຮົ່ມເຢັນ, ທັງເປັນການຫຼຸດຜ່ອນພາວະໂລກຮ້ອນ, ແນໃສ່ປູກຈິດສຳນຶກໃຫ້ ເດັກນ້ອຍໄດ້ຮູ້ຄຸນຄ່າ ແລະ ຄຸນປະໂຫຍດ ຂອງຕົ້ນໄມ້ຫຼາຍຂຶ້ນກວ່າເກົ່າ.

ພາຍຫຼັງກິດຈະກຳປູກຕົ້ນໄມ້ແຫ່ງຊາດ, ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ, ປະທານສະຫະພັນແມ່ຍິງ ຄຕພ ໄດ້ນຳພານ້ອງນ້ອຍເຍົາວະຊົນ ເຄື່ອນໄຫວກິດຈະກຳວັນເດັກນ້ອຍສາກົນ ໂດຍສະຫາຍ ໄດ້ຍົກໃຫ້ເຫັນຄວາມໝາຍ, ຄວາມສຳຄັນຂອງວັນເດັກສາກົນ ທີ່ມີປະຫວັດຄວາມເປັນມາຍາວນານ 100 ປີຜ່ານມາ, ເຊິ່ງປີນີ້ແມ່ນພາຍໃຕ້ຄຳຂວັນ “ສ້າງຄວາມເຂັ້ມແຂງໃຫ້ເດັກທຸກຄົນ: ສິດເທົ່າທຽມກັນ, ອະນາຄົດທີ່ປອດໄພ”, ແນໃສ່ຊຸກຍູ້ສົ່ງເສີມເດັກນ້ອຍ, ສ້າງເງື່ອນໄຂ ແລະ ໂອກາດໃຫ້ເດັກ ໄດ້ຮັບການພັດທະນາ ແລະ ມີອະນາຄົດທີ່ສົດໃສ ກ້າວເປັນຜູ້ໃຫຍ່ ທີ່ມີຄຸນນະພາບ, ເປັນເດັກຄຳຮູ້ຂອງພໍ່ແມ່, ເປັນນັກຮຽນດີ, ຮຽນເກັ່ງຂອງ ຄູ ແລະ ເປັນພົນລະເມືອງທີ່ດີຂອງສັງຄົມ, ເປັນກຳລັງຊັບພະຍາກອນມະນຸດ ທີ່ມີຄວາມເຂັ້ມແຂງຂອງຊາດ ເພື່ອສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງ.

ພ້ອມດຽວກັນນີ້, ສະຫາຍນາງ ຂັນມາລາ ພັນດານຸວົງ ແລະ ສະຫາຍ ນາງ ພອນມາລີ ເລັ່ງສະຫວັດ, ພັນລະຍາຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ ຍັງໄດ້ໃຫ້ກຽດເຂົ້າຮ່ວມ ແລະ ມອບຂອງຂວັນ, ເຄື່ອງທີ່ລະນຶກແກ່ເດັກນ້ອຍ, ເຊິ່ງໄດ້ສະແດງເຖິງຄວາມເປັນຫ່ວງເປັນໃຍ, ຄວາມເອົາໃຈໃສ່ ຂອງການນຳ ຄຕພ ທີ່ໄດ້ສ້າງເງື່ອນໄຂໃຫ້ແກ່ລູກຫຼານພະນັກງານ ໄດ້ມີໂອກາດໄດ້ພົບພໍ້ຢ້ຽມຢາມຖາມຂ່າວ, ຮູ້ຈັກຄຸ້ນເຄີຍກັນ, ເດັກຍິງ, ເດັກຊາຍ ມີຄວາມເທົ່າທຽມກັນໃນການສະແດງຄວາມຮູ້, ຄວາມສາມາດຕາມພອນສະຫວັນຂອງຕົນ, ເຫັນໄດ້ຮອຍຍິ້ມທີ່ອົບອຸ່ນລະຫວ່າງຜູ້ປົກຄອງ ແລະ ລູກຫຼານ; ກິດຈະກຳວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດໄດ້ສຳເລັດລົງ ດ້ວຍຄວາມເບີກບານມ່ວນຊື່ນ.